# ສົມໂພດແມ່ພຣະຖືກຍົກຂຶ້ນສະຫວັນທັງກາຍແລະວິນຍານ
# ວັນທີ 15 ສິງຫາ 2021



**ພຣະວໍລະສານໂດຍນັກບຸນລູກາ 1, 39-56**

ໃນເວລານັ້ນ, ພຣະນາງມາຣີອາຟ້າວລຸກຂຶ້ນອອກເດີນທາງໄປເມືອງແຫ່ງໜຶ່ງໃນແຖບພູເຂົາແຂວງຢູເດອາ. ພຣະນາງເຂົ້າໃນເຮືອນຂອງຊາກາຣີອາແລະຄຳນັບຖາມຂ່າວນາງເອຣີຊາແບັດ. ເມື່ອນາງເອຣີຊາແບັດໄດ້ຍິນຄຳຖາມຂ່າວນີ້ ບຸດໃນອຸທອນຂອງນາງກໍດິ້ນດັ່ນ. ນາງເອຣີຊາແບັດເຕັມພຽບດ້ວຍພຣະຈິດເຈົ້າຈຶ່ງຮ້ອງຂຶ້ນວ່າ: ພຣະນາງມີບຸນລົ້ນຍິ່ງໃດໆ ແລະບຸດອຸທອນພຣະນາງເປັນເຈົ້າຈອມບຸນ. ເຫດໃດພຣະມານດາຂອງພຣະອົງເຈົ້າຂອງຂ້າພະເຈົ້າຈຶ່ງສະເດັດມາຫາຂ້າພະເຈົ້າດັ່ງນີ້? ແຕ່ພໍຄຳຖາມຂ່າວຂອງພຣະນາງເຖິງຫູຂ້າພະເຈົ້າ ບຸດໃນອຸທອນຂອງຂ້າພະເຈົ້າກໍໂດດເຕັ້ນຍິນດີ. ພຣະນາງມີບຸນລາບຍ້ອນໄດ້ເຊື່ອວ່າສິ່ງທີ່ພຣະເປັນເຈົ້າໄດ້ກ່າວກັບພຣະນາງນັ້ນຈະສຳເລັດບໍລິບູນ.

ພຣະນາງມາຣີອາຈຶ່ງກ່າວວ່າ: ວິນຍານຜູ້ຂ້າຮ້ອງສັນລະເສີນພຣະເຈົ້າ. ຈິດໃຈຜູ້ຂ້າມ່ວນຊື່ນຍິນດີໃນພຣະເປັນເຈົ້າຜູ້ເປັນພຣະມະຫາໄຖ່ຂອງຜູ້ຂ້າ. ດ້ວຍວ່າ, ພຣະອົງໄດ້ຫລຽວເບິ່ງສາວໃຊ້ຜູ້ຕ່ຳນ້ອຍຂອງພຣະອົງ. ຈຶ່ງແຕ່ນີ້ໄປ, ທຸກຊາດທຸກເຊັ່ນຈະເອີ້ນຜູ້ຂ້າວ່າຜູ້ມີບຸນ. ຍ້ອນວ່າ ພຣະເຈົ້າຜູ້ຊົງລິດທານຸພາບໄດ້ທຳສິ່ງມະຫັດສະຈັນໃນຕົວຜູ້ຂ້າ ແລະພຣະນາມຂອງພຣະອົງເປັນພຣະນາມສັກສິດ. ພຣະອົງໄດ້ຊົງເມດຕາກາລຸນາຕໍ່ຜູ້ຢ້ານຈຽມພຣະອົງຕະຫລອດທຸກເວລາທຸກເມື່ອ. ພຣະອົງຊົງແຜງລິດພຣະຫັດຂອງພຣະອົງແລະຜາບພວກມັກໃຫຍ່ໄຝ່ສູງໃຫ້ແຕກກະຈາຍໄປ. ພຣະອົງໄດ້ປົດຜູ້ມີອຳນາດລົງຈາກບັນລັງແລະຍົກຍໍຜູ້ຕ່ຳນ້ອຍຂຶ້ນ. ຜູ້ຫອດຫິວ, ພຣະອົງທານໃຫ້ຮັ່ງມີ. ຜູ້ເສດຖີ ພຣະອົງໄລ່ໜີໄປມືເປົ່າ. ຍ້ອນລຳລຶກເຖິງພຣະເມດຕາກາລຸນາຂອງພຣະອົງ ພຣະອົງຈຶ່ງອຸ້ມຊູອິສຣາແອນຄົນໃຊ້ຂອງພຣະອົງ. ດັ່ງທີ່ພຣະອົງໄດ້ສັນຍາໄວ້ກັບບັນພະບຸລຸດຂອງພວກເຮົາ ກັບອາບຣາຮາມແລະລູກຫລານຂອງທ່ານຕະຫລອດໄປ.

ພຣະນາງມາຣີອາໄດ້ພັກເຊົາຢູ່ກັບນາງເອຣີຊາແບັດປະມານສາມເດືອນ ແລ້ວຈຶ່ງຫລັບເມືອເຮືອນຂອງຕົນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 1, 39-56**

ວັນນີ້ພວກເຮົາພ້ອມກັບພຣະກຣິສຕະຈັກສົມໂພດພຣະນາງມາຣີອາຖືກຍົກຂຶ້ນສະຫວັນທັງກາຍແລະວິນຍານ. ເປັນວັນແຫ່ງຄວາມຊື່ນຊົມຍິນດີສໍາລັບພວກເຮົາ ຍ້ອນຜູ້ເປັນແມ່ຂອງພຣະເຢຊູເຈົ້າ, ແມ່ຂອງພຣະກຣິສຕະຈັກແລະກໍເປັນແມ່ຂອງພວກເຮົາໄດ້ຖືກຍົກຂຶ້ນສູ່ສະຫວັນທັງກາຍແລະວິນຍານເພື່ອຮ່ວມສີມຸງຄຸນກັບພຣະບຸດຂອງພຣະແມ່ໃນສະຫວັນ. ເຫດການນີ້ກໍເປັນຄວາມຫວັງແລະຄວາມເຊື່ອສໍາລັບພວກເຮົາວ່າ ວັນໜຶ່ງພວກເຮົາກໍຈະໄດ້ຢູ່ຮ່ວມກັບພຣະແມ່ທັງກາຍແລະວິນຍານໃນເມືອງສະຫວັນນັ້ນດ້ວຍ. ວັນສົມໂພດນີ້ຍັງເປັນໂອກາດໃຫ້ພວກເຮົາໄດ້ເພັ່ງຊົມຊີວິດຂອງແມ່ພຣະ, ການຮ່ວມມືຂອງພຣະແມ່ໃນແຜນການແຫ່ງການໄຖ່ກູ້ຂອງພຣະເຈົ້າ ແລະສິ່ງມະຫັດສະຈັນທີ່ພຣະອົງຊົງກະທໍາຕໍ່ພຣະນາງ. ເພື່ອຈະໄດ້ເຂົ້າໃຈຄວາມໝາຍແລະພຣະຄຸນແຫ່ງງານສົມໂພດນີ້.

ພຣະວໍລະສານບໍ່ໄດ້ບອກໃຫ້ພວກເຮົາຮູ້ຈັກລາຍລະອຽດເຖິງພຣະນາງມາຣີອາ, ເຖິງບິດາມານຂອງພຣະນາງ ແລະເຖິງການຈາກໂລກນີ້ໄປຂອງພຣະນາງ. ແຕ່ສິ່ງທີ່ພວກເຮົາຮູ້ກໍຄື ພຣະນາງມາຣີອາເປັນຍິງສາວໄທບ້ານນາຊາແລັດຜູ້ໜຶ່ງທີ່ມີຄູ່ໝັ້ນຊື່ຢໍແຊໃນເຊື້ອສາຍຂອງກະສັດດາວິດ. ພຣະນາງມີຍາດພີ່ນ້ອງຜູ້ໜຶ່ງຊື່ເອລີຊາແບັດໃນເຊື້ອສາຍຂອງສົງອາອາຣອນ ແລະສາມີຂອງນາງຊື່ຊາກາຣີເປັນສົງໃນຄະນະຂອງອາບີອາ. ທ່ານທັງສອງໄດ້ອາໄສໃນເຂດແຂວງຢູເດວ.

ຊີວິດແລະແຜນການທຸກຢ່າງຂອງພຣະນາງມາຣີອາໄດ້ປ່ຽນໄປ ເມື່ອເທວະດາກາບຣີແອນມາແຈ້ງຂ່າວໃຫ້ພຣະນາງ. ເພາະ“ພຣະນາງເປັນຜູ້ມີພຣະຄຸນ, ພຣະເຈົ້າຢູ່ນໍາ” (ລກ 1, 28). ເປັນຄໍາກ່າວຂອງເທວະດາກາບຣີແອນຕໍ່ພຣະນາງມາຣີອາ. ແລະກໍເປັນຄໍາເວົ້າຂອງນາງເອລີຊາແບັດຕໍ່ພຣະນາງມາຣີອາເຊັ່ນດຽວກັນ ພາຍໃຕ້ການດົນໃຈຂອງພຣະຈິດເຈົ້າໂດຍກ່າວວ່າ: “ພຣະນາງມີບຸນລົ້ນຍິ່ງໃດໆ ແລະບຸດອຸທອນຂອງພຣະນາງເປັນເຈົ້າຈອມບຸນ” (ລກ 1, 42). ແລະຄໍາເວົ້ານີ້ກໍເປັນເວົ້າທີ່ພວກເຮົາເວົ້າຫລໍາໄປຫລໍາມາຫລາຍຄັ້ງເມື່ອເວລາສວດສາຍປະຄໍາ. ແຕ່ພວກເຮົາເຂົ້າໃຈສິ່ງທີ່ພວກເຮົາສວດພາວະນານັ້ນບໍ? ພຣະຄຸນທີ່ພຣະນາງມາຣີອາໄດ້ຮັບແມ່ນຫຍັງ? ແມ່ນຍ້ອນມີພຣະເຈົ້າຢູ່ນໍາບໍ? ພຣະເຈົ້າຢູ່ນໍາພຣະນາງເພື່ອຫຍັງ? ພຣະຄຸນທີ່ພຣະນາງມາຣີອາໄດ້ຮັບກໍຄື: ພຣະນາງໄດ້ຮັບເອົາແຜນການແຫ່ງການກູ້ໄຖ່ຂອງພຣະເຈົ້າເຂົ້າມາໃນຊີວິດຂອງພຣະນາງ ຜ່ານທາງພຣະວາຈານາດທີ່ໄດ້ຮັບເອົາກາຍໃນອຸທອນຂອງພຣະນາງ. ຈາກນັ້ນ, ພຣະຄຸນທີສອງທີ່ພຣະນາງໄດ້ຮັບກໍຄື ພຣະນາງເຊື່ອໝັ້ນໃນວາຈາພຣະເຈົ້າທີ່ກະທໍາໃນຕົວຂອງພຣະນາງໂດຍກ່າວວ່າ: “ຂ້າພະເຈົ້າເປັນສາວໃຊ້ຂອງພຣະເຈົ້າ, ຂໍໃຫ້ເປັນໄປໃນຂ້າພະເຈົ້າຕາມຄໍາເວົ້າຂອງທ່ານເທີ້ນ” (ລກ 1, 38). ພຣະຄຸນທີສາມທີ່ພຣະນາງໄດ້ຮັບກໍຄື ພຣະນາງໄດ້ຮ່ວມມືກັບການໄຖ່ກູ້ຂອງພຣະເຢຊູພຣະບຸດຂອງພຣະນາງຈົນເຖິງວິນາທີສຸດທ້າຍຢູ່ຕີນກາງເຂນ. ຢູ່ທີ່ນັ້ນ, ພຣະເຢຊູເຈົ້າໄດ້ມອບມະນຸດທັງມວນໃຫ້ເປັນລູກຂອງພຣະນາງຜ່ານທາງຕົວແທນຂອງນັກບຸນຢວງ: “ແມ່ເອີຍ! ນີ້ແລ້ວລູກຂອງແມ່”. ແລ້ວພຣະອົງກໍກ່າວກັບນັກບຸນຢວງວ່າ: “ນີ້ແລ້ວແມ່ຂອງເຈົ້າ” (ຢງ 19, 26-27). ວັນນີ້, ພຣະຄຸນທີ່ພຣະນາງມາຣີອາໄດ້ຮັບກໍຄື ພຣະນາງໄດ້ກັບເປັນຄືນມາທັງກາຍແລະວິນຍານເໝືອນກັບພຣະບຸດຂອງພຣະນາງ ແລະພຣະນາງໄດ້ຖືກຍົກຂຶ້ນສະຫວັນເພື່ອຮັບສີມຸງຄຸນຮ່ວມກັບພຣະບຸດເຈົ້າໃນອານາຈັກຂອງພຣະອົງ. ຍ້ອນພຣະເຈົ້າໄດ້ຍົກຍໍຜູ້ຕໍ່າຕ້ອຍຂຶ້ນບ່ອນສູງ” (ລກ 1, 52). ເປັນຄໍາເວົ້າຂອງພຣະນາງມາຣີອາໃນບົດເພງສັນລະເສີນຊຶ່ງພວກເຮົາໄດ້ຟັງວັນນີ້ໃນພຣະວໍລະສານໂດຍນັກບຸນລູກາ. ພຣະເຈົ້າໄດ້ຍົກພຣະນາງມາຣີອາ, ສາວໃຊ້ຜູ້ຕໍ່າຕ້ອຍຂອງພຣະອົງຂຶ້ນສູ່ສະຫວັນທັງກາຍແລະວິນຍານ. ເປັນຂໍ້ຄວາມເຊື່ອທີ່ຢັ້ງຢືນໃຫ້ພວກເຮົາຜູ້ເປັນລູກຂອງພຣະແມ່ວ່າ ເມື່ອພວກເຮົາຈາກໂລກນີ້ໄປແລ້ວພວກເຮົາກໍຈະໄດ້ກັບເປັນຄືນມາທັງກາຍແລະວິນຍານເພື່ອຮ່ວມສຸກກັບພຣະແມ່ໃນສີມຸງຄຸນຂອງພຣະບິດາແລະພຣະບຸດນັ້ນແລ.

ໂອພຣະເຈົ້າ, ຂໍໃຫ້ວັນສົມໂພດແມ່ພຣະມາຣີອາຖືກຍົກຂຶ້ນສະຫວັນທັງກາຍແລະວິນຍານນີ້ ເປັນວັນແຫ່ງຄວາມຫວັງແລະຄວາມເຊື່ອຂອງພຣະກຣິສຕະຈັກກໍຄືຂອງລູກດ້ວຍ. ເພາະວັນໜຶ່ງລູກຈະໄດ້ເຂົ້າໃນອານາຈັກສະຫວັນຮ່ວມກັບພຣະແມ່ທັງກາຍແລະວິນຍານນັ້ນແລ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ